# ຜົນການສຳຫຼວດຄວາມຕ້ອງການໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ

ກິໄລສອນ ອາໃສ[1], ພອນສະຫວັນ ເທບພະສຸລິນທອນ[2], ບຸນຫຼາຍ ຄຳແກ້ວ[3], ແສນທະວິສຸກ ພົມທິຈິດ[4]
ບຸນສົງ ສໍແກ້ວມະນີ[5] ແລະ ພູທອງ ວົງໄຊ[6]
*ພາກວິຊາຄູວິທະຍາສາດທຳມະຊາດ, ຄະນະສຶກສາສາດ, ມະຫາວິທະຍາໄລຈຳປາສັກ*

## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງ ເພື່ອ 1) ສຳຫຼວດຄວາມຕ້ອງການໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ 2) ປຽບທຽບລຳດັບຄວາມສຳຄັນຄວາມຕ້ອງການຈຳເປັນໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາໄດ້ແກ່ ຜູ້ບໍລິຫານ ຄູຜູ້ສອນ ແລະ ນັກສຶກສາ ຈຳນວນ 321 ຄົນ ເຄື່ອງມືທີ່ໃຊ້ໃນການສຳຫຼວດໄດ້ແກ່ ແບບສອບຖາມ ແບບສຳພາດ ແລະ ເຄື່ອງບັນທຶກສຽງ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄວ້າໄດ້ແກ່ ຄ່າສະເລ່ຍ ແລະ ຄ່າພົນປ່ຽນມາດຕະຖານ ແລະ ແບບສຳພາດ ໂດຍການວິເຄາະຂໍ້ມູນໃຊ້ການພັນລະນາວິເຄາະ ແລະ ວິທີການວິເຄາະໂປຣໂຕຄໍ

ຜົນການຄົ້ນຄ້ວາພົບວ່າ ມີຄວາມຕ້ອງການຈຳເປັນໃນການພັດທະນາຕົນເອງ ໄດ້ແກ່ 1) ດ້ານການບໍລິຫານຈັດການຢູ່ໃນລະດັບຫຼາຍ ($\bar{x} = 4.00, S.D = 0.67$) 2) ດ້ານວິຊາການຢູ່ໃນລະດັບຫຼາຍ ($\bar{x} = 4.03, S.D = 0.64$) 3) ດ້ານການຈັດການຮຽນ-ການສອນຢູ່ໃນລະດັບຫຼາຍ ($\bar{x} = 4.12, S.D = 0.50$) ແລະ 4) ດ້ານອຸປະກອນສື່ເທັກໂນໂລຍີທາງການສອນ ($\bar{x} = 4.07, S.D = 0.67$).

ຜົນຈາກການພິຈາລະນາການປຽບທຽບຈັດລຳດັບຄວາມຕ້ອງການ ແລະ ຈຳເປັນ ພົບວ່າ ຄວາມຕ້ອງການຈຳເປັນດ້ານການບໍລິຫານຈັດການ ($PNI_{modified} = 0.77$) ມີຄວາມສຳຄັນເປັນລຳດັບທີ 1 ລຳດັບທີ 2 ດ້ານອຸປະກອນສື່ເທັກໂນໂລຍີທາງການສອນ ($PNI_{modified} = 0.71$) ລຳດັບທີ 3 ດ້ານການຈັດການຮຽນ-ການສອນ ($PNI_{modified} = 0.58$) ແລະ ລຳດັບທີ 4 ດ້ານວິຊາການ ($PNI_{modified} = 0.56$)

ຜົນການສຳພາດຄວາມຕ້ອງການຈຳເປັນໃນການພັດທະນາຕົນເອງຂອງຜູ້ບໍລິຫານ ຄູຜູ້ສອນ ແລະ ນັກສຶກສາພົບວ່າ ທັງ 4 ດ້ານ ມີຄວາມຕ້ອງຈຳເປັນຫຼາຍໃນທຸກດ້ານ

**ຄຳສັບສຳຄັນ:** ຄວາມຕ້ອງການ, ການພັດທະນາຕົນເອງຂອງນັກສຶກສາ, ຫລັກສູດປະລິນຍາໂທ.

[1] *ພາກວິຊາຄະນິດສາດ, ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ ອີເມວ:* kilaysone@kkumail.com
[2] *ສຳນັກງານອະທິການ, ມະຫາວິທະຍາໄລ ຈຳປາສັກ ອີເມວ:* ptheppha@gmail.com
[3] *ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ, ອີເມວ:* B_khamkeo@yahool.com
[4] *ພາກວິຊາຄະນິດສາດ, ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ, ອີເມວ:* s.phomthichith@cu.edu.la
[5] *ພາກວິຊາພາສາອັງກິດ, ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ, ອີເມວ:* bounsongskn1983@gmail.com
[6] *ພາກວິຊາຄະນິດສາດ, ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ, ອີເມວ:* phouthogvongsay@gmail.com

# The Results of the Need for Student's development in Master's Program in Education Science, Faculty of Education, Champasak University

Kilaysone ASAI [1], Phonesavanh THAPPHASOULITHONE [2], Bounlay KHAMKEO [3], Saenthavisouk PHOMTHICHITH [4], Bounsong SORKEOMANY[5] and Phouthong VONGSAY[6]

*Department* of Natural Science Teacher, Faculty of Education, Champasack University

## Abstract

This study aims to survey the need for student development in the master's program in education science, faculty of education, Champasak University, and compare the need for student development in the master's program in education science, faculty of education, Champasak University. The sampling consisted of 321 participants: administrators, professors, and students. The research instrument applied a questionnaire, interview form, and sound recorder. The data was analyzed by statistical analysis, average, and standard deviation. In contrast, interview data was described and analyzed protocol.

The results found that the need for self-development especially administration and management was high ($\bar{x} = 4.00, S.D = 0.67$). Academic improvement was at ($\bar{x} = 4.03, S.D = 0.64$). Learning and teaching management was high ($\bar{x} = 4.12, S.D = 0.50$), and Visual aids and technology was also high ($\bar{x} = 4.07, S.D = 0.67$).

Additionally, comparing the need for student development in the master's program in education science found that t

[1]*Department of Natural Science Teacher, Email:kilaysone@kkumail.com*
[2]*President Building, Email: ptheppha@gmail.com*
[3]*Department of Natural Science Teacher, Email: B_khamkeo@yahool.com*
[4]*Department of Natural Science Teacher, Email: s.phomthichith@cu.edu.la*
[5]*Inpeng KHODSYMEUANG, Department of English, Email: bounsongskn1983@gmail.com*
[6]*Department of Natural Science Teacher, Email: phouthogvongsay@gmail.com*

**1. ພາກສະເໜີ**

ປະຈຸບັນເປັນຍຸກທີ່ໂລກເຮົາມີການພັດທະນາຄວາມຈະເລີນກ້າວໜ້າຢ່າງທັນສະໄໝ ເນື່ອງມາຈາກການໃຊ້ເຕັກໂນໂລຊີເພື່ອເຊື່ອມໂຍງຂໍ້ມູນຕ່າງ ໆ ຂອງທຸກພູມມີພາກຂອງໂລກເຂົ້າດ້ວຍກັນ ແລະ ກະແສການປ່ຽນແປງທາງສັງຄົມເກີດຂຶ້ນທົ່ວທຸກພູມມີພາກສິ່ງຜົນຕໍ່ວິທີການດຳລົງຊີວິດຂອງສັງຄົມມະນຸດເຮົາ ທັງນີ້ບໍ່ວ່າຈະເປັນການສຶກສາໂດຍຮັບການຖ່າຍທອດຈາກຄອບຄົວ ຈາກປະສົບການຕະຫຼອດຈົນການສຶກສາ ແລະ ຈາກຖາບັນສຶກສາລ້ວນແລ້ວແຕ່ເປັນການພັດທະນາຊັບພະຍາກອນມະນຸດໃຫ້ເປັນຜູ້ມີຄວາມຮູ້ ມີຄວາມຄິດ ມີທັກສະ ແລະ ຮູ້ຈັກພັດທະນາຕົນເອງ ຄອບຄົບ ສັງຄົມຕະຫຼອດຈົນປະເທດຊາດ

ການພັດທະນາບຸກຄະລາກອນມີຄວາມສຳຄັນຕໍ່ການບໍລິຫານໃນອົງກອນຢ່າງຍິ່ງ ເພາະບຸນຄົນໃນອົງກອນຈະຕ້ອງມີການປັບປຸງຕົນເອງໃຫ້ມີຄວາມຮູ້ ມີຄວາມສາມາດ ມີທັກສະໃນການປະຕິບັດໜ້າທີ່ຈົນເກີດຄວາມສຳນານເພີ່ມຕື່ມຢ່າງຕໍ່ເນື່ອງໃຫ້ທັນກັບຄວາມປ່ຽນແປງຂອງໂລກປັດຈຸບັນຢູ່ສະເໝີ ແລະ ຍັງສອດຄ່ອງກັບແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII ໂດຍມີຈຸດມຸ້ງໝາຍລວມຄືພັດທະນາລະບົບການສຶກສາເພື່ອສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້ ຄວາມສາມາດ ມີຄຸນສົມບັດສົນທຳປະຕິວັດ ແລະ ມີຄ່ານິຍົມທີ່ຖືກຕ້ອງ ມີນ້ຳໃຈຮັກຊາດ ຊື່ສັດບໍລິສຸດ ມີລະບຽບວິໄນ ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈດີ ມີຄວາມສາມັກຄີພາຍໃນຊາດ ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ ມີຄ່ານິຍົມຕໍ່ປະເພນີອັນດີງາມຂອງຊາດ ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນກຳລັງແຮງງານທີ່ມີຄຸນນະພາບສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ (ກະຊວງສຶກສາທິການ ແລະ ກິລາ, 2015)

ການພັດທະນາຕົນເອງເປັນເລື່ອງສຳຄັນ ແລະ ຈຳເປັນຫຼາຍສຳລັບບຸກຄະລາກອນ ແລະ ອົງກອນທີ່ກ່ຽວຂ້ອງເພາະຄວາມຕ້ອງການຂອງການພັດທະນາວິຊາຊີບຂອງບຸກຄະລາກອນມີຜົນຕໍ່ການປັບປຸງ ແລະ ພັດທະນາອົງກອນ ໃຫ້ມີຄວາມເຂັ້ມແຂງ ແລະ ການພັດທະນາບຸກຄະລາກອນເປັນປັດໃຈສຳຄັນທີ່ຈະຊ່ວຍໃຫ້ອົງກອນດຳເນີນການໄປສູ່ເປົ້າໝາຍໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ບຸນລະດາ ໄຊບຸນເຮືອງ (2017) ກ່າວວ່າ ການພັດທະນາຕົນເອງຖືວ່າມີຄວາມສຳຄັນທີ່ສຸດ ແລະ ເປົ້າໝາຍຂອງການສຶກສາຄືການພັດທະນາມະນຸດໃຫ້ສົມບູນທາງກາຍ ຈິດໃຈ ແລະ ປັນຍາ ການສຶກສາຕໍ່ວິຊາຊີບໃນທຸກລະດັບ ແລະ ທຸກປະເພດ ເປັນການມຸ້ງເນັ້ນໃຫ້ຜູ້ຮຽນມີຄວາມຮູ້ຄວາມສາມາດ ມີທັກສະ ແລະ ມີຄວາມໝັ້ນໃຈໃນການປະກອບອາຊີບ ສອດຄ່ອງກັບແນວຄິດ Jevons (1972) ໄດ້ກ່າວໄວ້ວ່າຈຸດມຸ້ງໝາຍຂອງສະຖາບັນການສຶກສາຊັ້ນສູງເປັນທີ່ໃຫ້ບັນດິດສາມາດວິເຄາະບັນຫາ ແລະ ສະຖານນະການຕ່າງ ໆ ໄດ້ ແລະ ສາມາດໃຊ້ຄວາມຮູ້ແກ້ບັນຫາໄດ້ຢ່າງດີ ແລະ ສາມາດເຮັດວຽກຮ່ວມກັບຜູ້ອື່ນໄດ້ຢ່າງມີປະສິດທິພາບ ນອກນັ້ນຍັງນຳແນວຄິດຂອງຜູ້ອື່ນມາໃຊ້ປະໂຫຍດໃນການປັບປຸງ ແລະ ພັດທະນາຕົນເອງ ແລະ ການສຶກສາຍັງເປັນປັດໃຈທີ່ສຳຄັນໃນການພັດທະນາຄົນໃຫ້ມີຄຸນນະພາບໂດຍການສຶກສາເປັນຂະບວນສຳຄັນທີ່ເຮັດໃຫ້ມະນຸດສາມາດພັດທະນາຄຸນນະພາບຂອງຊີວິດໃນການດຳເນີນຊີວິດໃນສັງຄົມໄດ້ຢ່າງມີຄວາມສຸກ ແລະ ຮູ້ເທົ່າທັນກັບການປ່ຽນແປງໃໝ່ຂອງໂລກ ນອກນັ້ນ Nadler (1989) ຍັງໄດ້ກ່າວວ່າ ການພັດທະນາສັບພະຍາກອນມະນຸດປະກອບດ້ວຍ 3 ດ້ານ ຄື 1) ສ້າງໃຫ້ສັບພະຍາກອນມີປະສິດທິພາບສູງໃນການເຮັດວຽກ 2) ສ້າງຄວາມຮູ້ ແລະ ທັກສະໃຫ້ແກ່ສັບພະຍາກອນມະນຸດເພື່ອພາລະໜ້າທີ່ໃນປະຈຸບັນ ແລະ ອານາຄົດ 3) ສ້າງການຮຽນຮູ້ໃຫ້ແກ່ສັບພະຍາກອນມະນຸດເຊິ່ງເປັນການສ້າງໂອກາດໃຫ້ເກີດຄວາມຈະເລີນກ້າວໜ້າໃນໜ້າທີການງານສ່ວນຕົວ ແລະ ສອດຄ່ອງກັບ Pattaveekant Srihong (2003) ການພັດທະນາບຸກຄາລາກອນນັ້ນຕ້ອງເນັ້ນໃຫ້ບຸກຄາລາກອນທຸກລະດັບໄດ້ຮັບຄວາມຮູ້ໃໝ່ (New Knowledge) ແນວຄິດໃໝ່ (New Concept) ປະສົບການໃໝ່ (New Experience) ທັກສະໃໝ່ (New Skill) ແລະ ທັດສະນະຄະຕິໃໝ່ (New Attitude)

ມະຫາວິທະຍາໄລ ຈຳປາສັກ ເປັນສູນກາງການສຶກສາ, ຄົ້ນຄວ້າວິທະຍາສາດ ແລະ ບໍລິການດ້ານວິຊາການທີ່ມີຄຸນນະພາບ, ເປັນສະຖາບັນສີຂຽວຕິດພັນກັບການຮັກສາສິ່ງແວດລ້ອມຢູ່ພາກໃຕ້ຂອງ ສປປ ລາວ, ພາກພື້ນ ແລະ ສາກົນ ນອກນັ້ນຍັງປະຕິບັດຕາມແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ແລະ ຍັງເປັນການເນັ້ນເລື່ອງການພັດທະນາຄົນເພື່ອໃຫ້ຄົນເປັນສູນກາງໃນການພັດທະນາດ້ານຕ່າງ ໆ ທັງດ້ານສະພາບແວດລ້ອມທາງສັງຄົມ ເສດຖະກິດ ຊັບພະຍາກອນທຳມະຊາດ ແລະ ປະເທດຊາດ ແລະ ຍັງສອດຄ່ອງກັບ ບຳລຸງ ມີສຸກ (2003) ໄດ້ກ່າວວ່າ ການພັດທະນາຄົນມີວັດຖຸປະສົງເພື່ອເສີມສ້າງສັກກາຍະພາບຂອງຄົນທຸກໃນດ້ານຮ່າງກາຍ ຈິດໃຈ ແລະ ສະຕິປັນຍາໃຫ້ມີສຸຂະພາບແຂງແຮງ ມີຄວາມຮູ້ຄວາມສາມາດ ແລະ ທັກສະໃນການປະກອບອາຊີບ ແລະ ການຕຽມບຸກຄົນໃຫ້ມີຄວາມພ້ອມເພື່ອປະກອບອາຊີບຕ່າງ ໆ ຈະເພີ່ມຄວາມຈຳເປັນ ແລະ ຄວາມຕ້ອງການທັງໃນດ້ານປະລິມານ ແລະ ຄຸນນະພາບ ການເລືອກອາຊີບທີ່ເໝາະສົມຂອງແຕ່ລະບຸກຄົນນອກຈາກຈະເປັນປະໂຫຍດແກ່ຕົນເອງແລ້ວຍັງຖືວ່າເປັນປະໂຫຍດຕໍ່ປະເທດຊາດອີກດ້ວຍ ແລະ ສອດຄ່ອງກັບ ຈຸດສຸມພັດທະນາຊັບພະຍາກອນມະນຸດເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງການພັດທະນາຂອງແຂວງ; ປັບປຸງພື້ນຖານໂຄງລ່າງ ແລະ ຂະຫຍາຍຕາໜ່າງ ແລະ ລະບົບການສຶກສາທຸກຊັ້ນ-ທຸກສາຍ ເພື່ອໃຫ້ຜູ້ຮຽນສາມາດເຂົ້າເຖິງການສຶກສາຢ່າງທົ່ວເຖິງ; ສົ່ງເສີມການຮຽນຮູ້ຕະຫລອດຊີວິດ ແລະ ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເພື່ອເປັນເຄື່ອງມືເຂົ້າຊ່ວຍໃນການຮຽນ-ການສອນ ໃຫ້ທັນກັບການປ່ຽນແປງຂອງຍຸກສະໄໝ (ແຜນພັດທະນາເສດຖະກິດ-ສັງຄົມຂອງ 5 ປີ ຄັ້ງທີ IX (2021-2025))

ຈາກເຫດຜົນຂ້າງຕົ້ນດັ່ງກ່າວ ຜູ້ຄົ້ນຄ້ວາຈຶ່ງມີຄວາມສົນໃຈ ເພື່ອສຳຫຼວດຄວາມຕ້ອງການຈຳເປັນໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ ແລະ ທັງຈະເປັນປະໂຫຍດໃນການວາງແຜນຈັດຫຼັກສູດການຮຽນ-ການສອນ ຕະຫຼອດຈົນການວິໄຈຄົ້ນຄ້ວາທີ່ກ່ຽວຂ້ອງລວມໄປເຖິງການຄັດເລືອກນັກສຶກສາໄປພັດທະນາໄດ້ຕົງກັບຄວາມຕ້ອງການ ແລະສັກກະຍະພາບຂອງແຕ່ລະຄົນ ເຊິ່ງຈະເປັນປະໂຫຍດໃນການແກ້ໄຂຫຼືລົດບັນຫາກ່ຽວກັບການພັດທະນານັກວິຊາການໄດ້ລະດັບໜຶ່ງອັນສົ່ງຜົນໃຫ້ໄດ້ບຸກຄະລາກອນທີ່ມີຄຸນນະພາບ ແລະ ຍັງຊ່ວຍພັນທະນາ ແລະ ປັບປຸງອີງໃຫ້ສອດຄ່ອງກັບການພັດທະນາເສດຖະກິດ ແລະ ສັງຄົມ

**2. ຈຸດປະສົງການຄົ້ນຄ້ວາ**

1. ເພື່ອສຳຫຼວດຄວາມຕ້ອງການໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ

2. ເພື່ອປຽບທຽບລຳດັບຄວາມສຳຄັນໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ

**3. ການທົບທວນນະວັດຕະກຳ**

ໃນພາກສ່ວນນີ້ເປັນການສັງລວມການທົບທວນນະວັດຕະກຳກ່ຽວກັບວັດຖຸປະສົງຂອງການຄົ້ນຄ້ວາ ໂດຍສະເພາະ ຄວາມຕ້ອງການຈຳເປັນການພັດທະນາຄົນ ແລະ ວິຊາຊີບ ລາຍລະອຽດມີດັ່ງລຸ່ມນີ້

**ຄວາມຕ້ອງການຈຳເປັນ**

Witkin ໄດ້ກ່າວວ່າ ຄວາມຕ້ອງການຈຳເປັນ (Need) ຄື ຄວາມແຕກຕ່າງຫຼືຊ່ອງວ່າງລະຫວ່າງສະພາວະທີ່ປາດຖະໜາຫຼືຍອມຮັບໄດ້ກັບສະພາວະທີ່ເປັນຈິງ (ອ້າງອີງໃນ Howard S. Davidson. 1995: 184, citing Witkin. B.R.1997. Need assessment kits, models, & tools. Education Technology,17, p 4-11) ນອກນັ້ນ Don Hellriegel. John W. Slocum Jr. and Richard W Woodman (1989:143)

ກວ່າໄວ້ວ່າ ຄວາມຕ້ອງການຈຳເປັນໝາຍເຖິງພາວະທີ່ບຸກຄົນເກີດຄວາມຮູ້ສຶກຂາດແຄນຫຼືບໍ່ພຽງພໍໃນໄລຍະເວລາໃດເວລາໜຶ່ງ ຊຶ່ງເປັນພາວະຄວາມຂາດແຄນທາງດ້ານຈິດໃຈ ກາຍະພາບ ຫຼື ສັງຄົມ

ສະຫຼຸບວ່າ ຄວາມຕ້ອງການຈຳເປັນ ຄື ຄວາມປາດຖະໜາຄາດຫວັງຫຼືຕ້ອງການໃຫ້ເກີດຂຶ້ນ ໂດຍຄວາມແຕກຕ່າງທີ່ເກີດຂຶ້ນນັ້ນເປັນສິ່ງທີ່ສະທ້ອນສະພາບໃຫ້ເຫັນວ່າບັນຫານັ້ນຕ້ອງການແກ້ໄຂ ແລະ ນຳໄປສູ່ການຕັດສິນໃຈທີ່ຈະປັບປຸງບັນຫາທີ່ເກີດຂຶ້ນ

**ການພັດທະນາຄົນ**

Nadler ກ່າວວ່າ ການພັດທະນາສັບພະຍາກອນມະນຸດເພື່ອສ້າງໃຫ້ເກີດການປັບປຸງການເຮັດວຽກໃຫ້ດີຂຶ້ນເຊິ່ງປະກອບດ້ວຍ 3 ດ້ານ ຄື 1) ສ້າງໃຫ້ສັບພະຍາກອນມີປະສິດທິພາບສູງໃນການເຮັດວຽກ 2) ສ້າງຄວາມຮູ້ ແລະ ທັກສະໃຫ້ແກ່ສັບພະຍາກອນມະນຸດເພື່ອພາລະໜ້າທີ່ໃນປະຈຸບັນ ແລະ ອານາຄົດ 3) ສ້າງການຮຽນຮູ້ໃຫ້ແກ່ສັບພະຍາກອນມະນຸດເຊິ່ງເປັນການສ້າງໂອກາດໃຫ້ເກີດຄວາມຈະເລີນກ້າວໜ້າໃນໜ້າທີການງານສ່ວນຕົວ ແລະ Nadler. C.R. 1989. Developing Human Resource ແລະ Carl Rogers (1969) ກວ່າໄວ້ອີກວ່າ ບຸກຄົນມີຄວາມໂນ້ມອຽງຕາມທຳມະຊາດທີ່ຈະພັດທະນາຕົນເອງທຸກດ້ານເພື່ອຮັກສາຫຼືຄອງໄວ້ທີ່ເປັນຕົວຂອງຕົວເອງ ແລະ ພັດທະນາໃຫ້ດີຂຶ້ນ ນອກນັ້ນ Abraham Maslow ຍັງໄດ້ກວ່າເພີ່ມຕື່ມອີກວ່າ ບຸກຄົນມີຄວາມຕ້ອງການເພື່ອພັດທະນາຕົນຄືຄວາມຕ້ອງການທີ່ຈະເລີນເຕີບໂຕຫຼືພັດທະນາເຕັມທີ່ຕາມສັກກະຍະພາບຂອງຕົນທາງດ້ານພຸດທິປັນຍາ ທັກສະ ແລະ ເຈນຕະຄະຕິ (ອ້າງອີງໃນ Pattaveekant Srihong, 2003).

ສະຫຼຸບວ່າ ການພັດທະນາສັບພະຍາກອນມະນຸດ ຄື ການວາງແຜນດຳເນີນການຢ່າງຕໍ່ເນື່ອງເພື່ອຕຽມຄວາມພ້ອມ ປັບປຸງ ປ່ຽນແປງ ແລະ ພັດທະນາບຸກຄາລາກອນເພື່ອຕອບສະໜອງຕາມວັດຖຸປະສົງຂອງອົງກອນ

**ວິຊາຊີບ**

ຄວາມເປັນວິຊາຊີບ ຄື ອາຊີບປະເພດໃດປະເພດໜຶ່ງທີ່ເປັນການຍອມຮັບທີ່ສຳຄັນໃນສັງຄົມ ເຊັ່ນ ອາຊີບທາງການແພດ ກົດໝາຍ ວິສະວະກຳ ການສອນລະດັບມະຫາວິທະຍາໄລ ແລະ ອື່ນ ໆ ຜູ້ປະກອບອາຊີບໂດຍປົກກະຕິຈະຕ້ອງມີທັກສະເທັກນິກສູງ ແລະ ໄດ້ຮັບການສຶກສາຫຼືຜ່ານການອົບຮົມຈົນເປັນທີ່ຮັບຮອງຢ່າງເປັນທາງການ ມີຫຼັກຖານສະແດງວຸດທິ ການຮັບຮອງວ່າອາຊີບໃດເປັນວິຊາຊີບສອດຄ່ອງກັບ Bucher ແລະ Strauss (1961) ກວ່າວ່າ ການສ້າງກຸ່ມອາຊີບເພື່ອພັດທະນາຂຶ້ນເປັນວິຊາຊີບ ການໃຫ້ການສຶກສາອົບຮົມຫຼືຖ່າຍທອດທາງສັງຄົມແກ່ສະມາຊິກໃໝ່ຈະນຳໄປສູ່ການມີລັກສະນະຮ່ວມກັນຂອງບັນທັດຖານສະເພາະແບບ ຫຼັກການ ແລະ ແບບແຜນພຶດຕິກຳທາງວິຊາຊີບ ນອກນັ້ນ Goode (1957) ຍັງກວ່າວ່າ ວິຊາຊີບຈະຕ້ອງມີການຖ່າຍທອດທາງສັງຄົມຫຼືຜ່ານການສຶກສາອົບຮົມ ມີກົນໄກການຄວບຄຸມທາງສັງຄົມ ແລະ ມີການປະເມີນທາງວິຊາຊີບ

**4. ວິທີການຄົ້ນຄວ້າ**

ການຄົ້ນຄວ້າວິໄຈນີ້ເປັນການຄົ້ນຄວ້າສຳຫຼວດຄວາມຕ້ອງການໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ ໂດຍໃຊ້ລະບຽບວິທີວິໄຈແບບປະສົມປະສານ ເພື່ອໃຫ້ການຄົ້ນຄວ້າເປັນໄປຕາມຈຸດປະສົງ

**4.1. ປະຊາກອນ ແລະ ກຸ່ມເປົ້າໝາຍ**

ຜູ້ຕອບແບບສອບຖາມຄັ້ງນີ້ປະກອບດ້ວຍ ຜູ້ບໍລິຫານຈຳນວນ 20 ຄົນ ມີຄູສອນຈຳນວນ 22 ຄົນ ແລະ ນັກສຶກສາຈຳນວນ 279 ຄົນ ການເລືອກຂະໜາດກຸ່ມຕົວຢ່າງຂອງ Krejcie ແລະ Morgan (1970) (Srisa-Art 2010; Gall, Brog ແລະ Gall 1996) ໂດຍການກຳນົດເທັກນິກການສຸ່ມແບບແບ່ງຊັ້ນ ແລະ ການຄັດເລືອກແບບງ່າຍດາຍ.

**4.2. ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ**

ໃນການເກັບຮວບຮວມຂໍ້ມູນຕາມຈຸດປະສົງຂອງການຄົ້ນຄວ້າເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າໄດ້ແກ່:

1) ແບບສອບຖາມໃຊ້ສໍາລັບຮວບຮວມຂໍ້ມູນ ແລະ ຄວາມຕ້ອງການຈຳເປັນໃນການພັດທະນາຕົນເອງຈາກກຸ່ມເປົ້າໝາຍຈຳນວນ 321 ຄົນ ເພື່ອໃຊ້ເປັນຂໍ້ມູນໃນການພິຈາລະນາໃນການປັບປຸງ ແລະ ສົ່ງເສີມຄວາມຕ້ອງການ ໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ແບບສອບຖາມນີ້ຜ່ານການພິຈາລະນາຄວາມສອດຄ່ອງຂອງຜູ້ຊ່ຽວຊານຈຳນວນ 5 ຄົນ ໂດຍມີຄ່າສະເລ່ຍຄວາມສອດຄ່ອງເທົ່າກັບ 1.00 ແລະ ໄດ້ແກ້ໄຂຕາມປະເດັນທີ່ຜູ້ຊ່ຽວຊານໄດ້ແນະນໍາ

2) ແບບສໍາພາດ ເຊິ່ງໄດ້ຮັບການອອກແບບໃຫ້ມີຄໍາຖາມໃນການສໍາພາດໂດຍກໍານົດປະເດັນສໍາຄັນໃນການສໍາພາດສະພາບປະຈຸບັນກ່ຽວກັບຄວາມຕ້ອງການໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ແບບສໍາພາດນີ້ຜ່ານການພິຈາລະນາຄວາມສອດຄ່ອງຂອງຜູ້ຊ່ຽວຊານຈໍານວນ 5 ຄົນ ໂດຍມີຄ່າສະເລ່ຍຄວາມສອດຄ່ອງເທົ່າກັບ 1.00 ແລະ ໄດ້ແກ້ໄຂຕາມປະເດັນທີ່ຜູ້ຊ່ຽວຊານໄດ້ແນະນໍາ

3) ເຄື່ອງບັນທຶກສຽງ ແລະ ໃຊ້ບັນທຶກໃນລະຫວ່າງການໃຫ້ການສໍາພາດ

**4.3. ວິທີເກັບກໍາຂໍ້ມູນ**

ໃນການດໍາເນີນການຄົ້ນຄວ້າໃນຄັ້ງນີ້ ໂດຍການເກັບກໍາຂໍ້ມູນກໍານົດວິທີໃນການເກັບຮວບຮວມຂໍ້ມູນໄວ້ 3 ວິທີຄື: 1) ແບບສອບຖາມ: ແມ່ນໃຊ້ສອບຖາມຄວາມຕ້ອງການ ແລະ ຈໍາເປັນ ຈໍານວນ 2 ຊຸດ 2) ການສໍາພາດ: ແມ່ນຕ້ອງການໃຫ້ໄດ້ຂໍ້ມູນແບບຄຸນນະພາບທີ່ກ່ຽວຂ້ອງກັບສະພາບເປັນຢູ່ ແລະ ຄວາມຕ້ອງການໃນການສຶກສາຕໍ່ລະດັບປະລິນຍາໂທດ້ວຍການກຽມຄໍາຖາມປາຍເປີດເປັນຫົວຂໍ້ໃນການສົນທະນາແບບກວ້າງໆ ເພື່ອໃຊ້ເປັນແນວທາງໃນການສົນທະນາກັບຜູ້ໃຫ້ຂໍ້ມູນຫຼັກ ແລະ ເຊື່ອມໂຍງເຂົ້າສູ່ປະເດັນທີ່ຕ້ອງການສຶກສາຕໍ່ລະດັບປະລິນຍາໂທ ແລະ 3) ການບັນທຶກສຽງແມ່ນບັນທຶກໃນລະຫວ່າງການໃຫ້ການສໍາພາດ ແລະ ສະແດງຄວາມຄິດເຫັນຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດດ້ານການສຶກສາ.

**4.4. ການວິເຄາະຂໍ້ມູນ ແລະສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ**

1. ສະຖິຕິພັນລະນາ ໂດຍການໃຊ້ສະຖິຕິພື້ນຖານ

- ຄ່າສະເລ່ຍ (Mean) ໂດຍໃຊ້ສູດ (ບຸນສົມ ສີສະອາດ,2002)

$$\overline{X} = \frac{\sum X}{N}$$

ເມື່ອ $\overline{X}$ ແທນ ຄ່າສະເລ່ຍ

$\sum X$ ແທນ ຜົນບວກຂອງຄະແນນທັງໝົດ

$N$ ແທນ ຈໍານວນຄົນໃນກຸ່ມ

- ຄ່າພັນປ່ຽນມາດຕະຖານ (Standard Deviation)

$$S.D = \sqrt{\frac{N\sum X^2 - \left(\sum X\right)^2}{N(N-1)}}$$

ເມື່ອ $S.D$ ແທນ ຄ່າພັນປ່ຽນມາດຕະຖານ

$X$ ແທນ ຄະແນນແຕ່ລະຕົວ

$N$ ແທນ ຈໍານວນຄົນໃນກຸ່ມ

$\sum$ ແທນ ຜົນບວກ

ເຊິ່ງກໍານົດເກນຄະແນນ ດັ່ງນີ້:

1 ຄະແນນ ໝາຍເຖິງ ນ້ອຍສຸດ

2 ຄະແນນ ໝາຍເຖິງ ນ້ອຍ

3 ຄະແນນ ໝາຍເຖິງ ປານກາງ

4 ຄະແນນ ໝາຍເຖິງ ຫຼາຍ

5 ຄະແນນ ໝາຍເຖິງ ຫຼາຍສຸດ

ເກນໃນການແປຜົນ ດັ່ງນີ້

1) ເກນການແປຜົນສະພາບເປັນຢູ່

ຄະແນນສະເລ່ຍ 1.00-1.50 ໝາຍເຖິງ ສະພາບເປັນຢູ່ນ້ອຍສຸດ

ຄະແນນສະເລ່ຍ 1.51-2.50 ໝາຍເຖິງ ສະພາບເປັນຢູ່ນ້ອຍ

ຄະແນນສະເລ່ຍ 2.51-3.50 ໝາຍເຖິງ ສະພາບເປັນຢູ່ປານກາງ

ຄະແນນສະເລ່ຍ 3.51-4.50 ໝາຍເຖິງ ສະພາບເປັນຢູ່ຫຼາຍ

ຄະແນນສະເລ່ຍ 4.51-5.00 ໝາຍເຖິງ ສະພາບເປັນຢູ່ຫຼາຍສຸດ

2) ເກນການແປຜົນຂອງສະພາບຄວາມຕ້ອງການ

ຄະແນນສະເລ່ຍ 1.00-1.50 ໝາຍເຖິງ ສະພາບຄວາມຕ້ອງການນ້ອຍສຸດ

ຄະແນນສະເລ່ຍ 1.51-2.50 ໝາຍເຖິງ ສະພາບຄວາມຕ້ອງການນ້ອຍ

ຄະແນນສະເລ່ຍ 2.51-3.50 ໝາຍເຖິງ ສະພາບຄວາມຕ້ອງການປານກາງ

ຄະແນນສະເລ່ຍ 3.51-4.50 ໝາຍເຖິງ ສະພາບຄວາມຕ້ອງການຫຼາຍ

ຄະແນນສະເລ່ຍ 4.51-5.00 ໝາຍເຖິງ ສະພາບຄວາມຕ້ອງການຫຼາຍສຸດ

2. ປະເມີນຄວາມຕ້ອງການຈຳເປັນ ແລະ ຈັດລຳດັບຄວາມສຳຄັນຂອງຄວາມຕ້ອງການດ້ວຍວິທີ Priority Needs Index ໂດຍໃຊ້ສູດ $PNI_{modified} = (I - D)/D$ ແລະ ກຳນົດຄ່າ $PNI_{modified}$ ຫຼາຍກວ່າ 0.20 ຂຶ້ນໄປ (ສຸວິມົນ ວ່ອງວານິດ, 2015)

3. ການວິເຄາະຂໍ້ມູນແບບຄຸນນະພາບໂດຍສ່ວນຂໍ້ມູນທີ່ເປັນການຄິດຂອງການສຳພາດໄດ້ຖອດຂໍ້ມູນໃຊ້ວິທີການວິເຄາະເນື້ອໃນ ແລະ ການວິເຄາະໂປຣໂຕຄໍ (Protocol Analysis)

**5. ຜົນໄດ້ຮັບ**

ຈາກວັດຖຸປະສົງຂອງການຄົ້ນຄ້ວາເພື່ອສຳຫຼວດຄວາມຕ້ອງການໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ ຜູ້ຄົ້ນຄ້ວາໄດ້ດຳເນີນການວິເຄາະແບບສອບຖາມ ກຸ່ມເປົ້າໝາຍໄດ້ແກ່ ຜູ້ບໍລິຫານ ອາຈານຜູ້ສອນ ແລະ ນັກສຶກສາ ຈຳນວນ 321 ຄົນ ຜົນການຄົ້ນຄ້ວາປະກົດດັ່ງນີ້

**1. ຂໍ້ມູນພື້ນຖານຂອງກຸ່ມຕົວຢ່າງ**

ດ້ານຂໍ້ມູນພື້ນຖານຈາກການວິເຄາະຜູ້ຕອບແບບສອບຖາມຂອງກຸ່ມເປົ້າໝາຍທັງ 3 ກຸ່ມ ໄດ້ແກ່ ຜູ້ບໍລິຫານພົບວ່າ ຈຳນວນ 20 ຄົນ ສ່ວນຫຼາຍເປັນເພດຊາຍຈຳນວນ 16 ຄົນ ເທົ່າກັບ 80 ເປີເຊັນ ມີອາຍຸ 32 ປີຂຶ້ນໄປ ເທົ່າກັບ 95 ເປີເຊັນ ສ່ວນຫຼາຍຢູ່ໃນແຂວງຈຳປາສັກຈຳນວນ 9 ຄົນ ເທົ່າກັບ 45 ເປີເຊັນ ມີປະສົບການເຮັດວຽກສ່ວນຫຼາຍຢູ່ໃນລະຫວ່າງ 16-20 ປີ ຈຳນວນ 11 ຄົນ ເທົ່າກັບ 55 ເປີເຊັນ ແລະ ກຸ່ມຄູຜູ້ສອນຈຳນວນ 22 ຄົນ ສ່ວນຫຼາຍເປັນເພດຊາຍຈຳນວນ 19 ຄົນ ເທົ່າກັບ 95 ເປີເຊັນ ມີອາຍຸ 32 ປີຂຶ້ນໄປ ຈຳນວນ 16 ຄົນ ເທົ່າກັບ 80 ເປີເຊັນ ສ່ວນຫຼາຍຢູ່ໃນແຂວງຈຳປາສັກຈຳນວນ 8 ຄົນ ເທົ່າກັບ 40 ເປີເຊັນ ມີປະສົບການເຮັດວຽກສ່ວນຫຼາຍຢູ່ໃນລະຫວ່າງ 16-20 ປີ ຈຳນວນ 15 ຄົນ ເທົ່າກັບ 75 ເປີເຊັນ

ນອກຈາກນີ້ຜົນຍັງພົບວ່າ ກຸ່ມນັກສຶກສາຈຳນວນ 279 ຄົນສ່ວນຫຼາຍເປັນເພດຍິງ ຈຳນວນ 152 ຄົນ ເທົ່າກັບ 54.48 ເປີເຊັນ ມີອາຍຸຢູ່ໃນລະຫວ່າງ 21-25 ປີ ເທົ່າກັບ 76.70 ເປີເຊັນ ສ່ວນຫຼາຍຢູ່ໃນແຂວງຈຳປາສັກຈຳນວນ 201 ຄົນ ເທົ່າກັບ 72.04 ເປີເຊັນ ໂດຍມີແຜນການຍົກລະດັບເປັນສ່ວນຫຼາຍຈຳນວນ 198 ຄົນ ເທົ່າກັບ 70.97 ເປີເຊັນ ແລະ ແຜນຍົກລະດັບໃນສົກການສຶກສາ 2027-

2028 ຈຳນວນ 82 ຄົນ ເທົ່າກັບ 29.39 ເປີເຊັນ ແລະ ມີຄວາມຄາດຫວັງຕ້ອງການສະຖາການສຶກສາທີ່ຕ່າງປະເທດເປັນສ່ວນຫຼາຍ ຈຳນວນ 137 ຄົນ ເທົ່າກັບ 49.10 ເປີເຊັນ

**2. ສະພາບເປັນຢູ່ ແລະ ຄວາມຕ້ອງການຈຳເປັນໃນການພັດທະນາຕົນເອງດ້ານການບໍລິຫານຈັດການ , ດ້ານວິຊາການ, ດ້ານການຈັດການຮຽນ-ການສອນ ແລະ ດ້ານອຸປະກອນສື່ເທັກໂນໂລຍີທາງການສອນ**

ຂໍ້ມູນກ່ຽວກັບສະພາບເປັນຢູ່ ແລະ ຄວາມຕ້ອງການຈຳເປັນໃນການພັດທະນາຕົນເອງດ້ານການບໍລິຫານຈັດການ, ດ້ານວິຊາການ, ດ້ານການຈັດການຮຽນ-ການສອນ ແລະ ດ້ານອຸປະກອນສື່ເທັກໂນໂລຍີທາງການສອນ

2.1 ຜົນຈາກການວິເຄາະດ້ານການບໍລິຫານຈັດການພົບວ່າ ກຸ່ມເປົ້າໝາຍທຸກກຸ່ມຈຳນວນ 321 ຄົນ ມີການປະຕິບັດດຳເນີນການໃນສະພາບເປັນຢູ່ ໂດຍພາບລວມຢູ່ໃນລະດັບນ້ອຍມີຄ່າສະເລ່ຍ ($\bar{x} = 2.26, S.D = 0.45$) ເມື່ອມີການພິຈາລະນາຈຳແນກຕາມກຸ່ມພົບວ່າ ກຸ່ມຜູ້ບໍລິຫານມີຢູ່ໃນລະດັບນ້ອຍມີຄ່າສະເລ່ຍ ($\bar{x} = 2.35, S.D = 0.48$) ກຸ່ມຄູຜູ້ສອນມີຢູ່ໃນລະດັບນ້ອຍ ມີຄ່າສະເລ່ຍ ($\bar{x} = 2.10, S.D = 0.37$). ແລະ ກຸ່ມນັກສຶກສາມີຢູ່ໃນລະດັບນ້ອຍມີຄ່າສະເລ່ຍ ($\bar{x} = 2.32, S.D = 0.50$).

ນອກຈາກນີ້ ຍັງພົບວ່າ ກຸ່ມເປົ້າໝາຍທຸກກຸ່ມຈຳນວນ 321 ຄົນ ມີຄວາມຕ້ອງການຈຳເປັນດ້ານການບໍລິຫານຈັດການໂດຍພາບລວມຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 4.00, S.D = 0.67$). ເມື່ອມີການພິຈາລະນາຈຳແນກຕາມກຸ່ມພົບວ່າ ກຸ່ມຜູ້ບໍລິຫານມີຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 3.88, S.D = 0.75$) ກຸ່ມຄູຜູ້ສອນມີຄວາມຈຳເປັນຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ ($\bar{x} = 3.79, S.D = 0.71$). ແລະ ກຸ່ມນັກສຶກສາມີຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 4.33, S.D = 0.55$).

2.2 ຈາກການວິເຄາະດ້ານວິຊາການພົບວ່າ ກຸ່ມເປົ້າໝາຍທຸກກຸ່ມຈຳນວນ 321 ຄົນ ມີການປະຕິບັດດຳເນີນການໃນສະພາບເປັນຢູ່ ໂດຍພາບລວມຢູ່ໃນລະດັບປານກາງມີຄ່າສະເລ່ຍ ($\bar{x} = 2.58, S.D = 0.50$). ເມື່ອມີການພິຈາລະນາຈຳແນກຕາມກຸ່ມພົບວ່າ ກຸ່ມຜູ້ບໍລິຫານມີຢູ່ໃນລະດັບປານກາງມີຄ່າສະເລ່ຍ ($\bar{x} = 2.55, S.D = 0.50$). ກຸ່ມຄູຜູ້ສອນມີຢູ່ໃນລະດັບປານກາງມີຄ່າສະເລ່ຍ ($\bar{x} = 2.67, S.D = 0.47$). ແລະ ກຸ່ມນັກສຶກສາມີຢູ່ໃນລະດັບປານກາງມີຄ່າສະເລ່ຍ ($\bar{x} = 2.51, S.D = 0.51$).

ນອກຈາກນີ້ ຍັງພົບວ່າ ກຸ່ມເປົ້າໝາຍທຸກກຸ່ມຈຳນວນ 321 ຄົນ ມີຄວາມຕ້ອງການດ້ານວິຊາການໂດຍພາບລວມຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 4.03, S.D = 0.64$). ເມື່ອມີການພິຈາລະນາຈຳແນກຕາມກຸ່ມພົບວ່າ ກຸ່ມຜູ້ບໍລິຫານມີຄວາມຈຳເປັນໃນການປະຕິບັດຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 3.86, S.D = 0.63$). ກຸ່ມຄູຜູ້ສອນມີຄວາມຈຳເປັນຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 3.80, S.D = 0.73$). ແລະ ກຸ່ມນັກສຶກສາມີຄວາມຈຳເປັນຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 4.43, S.D = 0.58$).

2.3 ຈາກການວິເຄາະດ້ານການຈັດການຮຽນ-ການສອນພົບວ່າ ກຸ່ມເປົ້າໝາຍທຸກກຸ່ມຈຳນວນ 321 ຄົນ ມີການປະຕິບັດດຳເນີນການໃນສະພາບເປັນຢູ່ ໂດຍພາບລວມຢູ່ໃນລະດັບປານກາງມີຄ່າສະເລ່ຍ ($\bar{x} = 2.59, S.D = 0.49$). ເມື່ອມີການພິຈາລະນາຈຳແນກຕາມກຸ່ມພົບວ່າ ກຸ່ມຜູ້ບໍລິຫານມີການປະຕິບັດຢູ່ໃນລະດັບປານກາງມີຄ່າສະເລ່ຍ ($\bar{x} = 2.58, S.D = 0.49$). ກຸ່ມຄູຜູ້ສອນມີການປະຕິບັດຢູ່ໃນລະດັບປານກາງມີຄ່າສະເລ່ຍ ($\bar{x} = 2.70, S.D = 0.46$). ແລະ ກຸ່ມນັກສຶກສາມີການປະຕິບັດຢູ່ໃນລະດັບນ້ອຍມີຄ່າສະເລ່ຍ ($\bar{x} = 2.50, S.D = 0.51$).

ນອກຈາກນີ້ ຍັງພົບວ່າ ກຸ່ມເປົ້າໝາຍທຸກກຸ່ມຈຳນວນ 321 ຄົນ ມີຄວາມຕ້ອງການຈຳເປັນດ້ານການຈັດການຮຽນ-ການສອນໂດຍພາບລວມຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 4.12, S.D = 0.50$).

ເມື່ອມີການພິຈາລະນາຈຳແນກຕາມກຸ່ມພົບວ່າ ກຸ່ມຜູ້ບໍລິຫານມີຄວາມຈຳເປັນຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 3.93, S.D = 0.30$). ກຸ່ມຄູຜູ້ສອນມີຄວາມຈຳເປັນຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 4.03, S.D = 0.63$). ແລະ ກຸ່ມນັກສຶກສາມີຄວາມຈຳເປັນຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 4.40, S.D = 0.58$).

2.4 ຜົນຈາກການວິເຄາະດ້ານອຸປະກອນສື່ເທັກໂນໂລຍີທາງການສອນພົບວ່າ ກຸ່ມເປົ້າໝາຍທຸກກຸ່ມຈຳນວນ 321 ຄົນ ມີການປະຕິບັດດຳເນີນການໃນສະພາບເປັນຢູ່ ໂດຍພາບລວມຢູ່ໃນລະດັບນ້ອຍມີຄ່າສະເລ່ຍ ($\bar{x} = 2.37, S.D = 0.49$). ເມື່ອມີການພິຈາລະນາຈຳແນກຕາມກຸ່ມພົບວ່າ ກຸ່ມຜູ້ບໍລິຫານມີຢູ່ໃນລະດັບປານກາງມີຄ່າສະເລ່ຍ ($\bar{x} = 2.56, S.D = 0.50$). ກຸ່ມຄູຜູ້ສອນມີຢູ່ໃນລະດັບນ້ອຍມີຄ່າສະເລ່ຍ ($\bar{x} = 2.18, S.D = 0.44$). ແລະ ກຸ່ມນັກສຶກສາມີຢູ່ໃນລະດັບນ້ອຍມີຄ່າສະເລ່ຍ ($\bar{x} = 2.36, S.D = 0.52$).

ນອກຈາກນີ້ ຍັງພົບວ່າ ກຸ່ມເປົ້າໝາຍທຸກກຸ່ມຈຳນວນ 321 ຄົນ ມີຄວາມຕ້ອງການຈຳເປັນດ້ານອຸປະກອນສື່ເທັກໂນໂລຍີທາງການສອນໂດຍພາບລວມຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 4.07, S.D = 0.67$). ເມື່ອມີການພິຈາລະນາຈຳແນກຕາມກຸ່ມພົບວ່າ ກຸ່ມຜູ້ບໍລິຫານມີຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 3.84, S.D = 0.71$). ກຸ່ມຄູຜູ້ສອນມີຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 3.79, S.D = 0.72$). ແລະ ກຸ່ມນັກສຶກສາມີຢູ່ໃນລະດັບຫຼາຍມີຄ່າສະເລ່ຍ ($\bar{x} = 4.39, S.D = 0.56$).

**3.** ການປຽບທຽບຄວາມແຕກຕ່າງລະຫວ່າງສະພາບເປັນຢູ່ ແລະ ຄວາມຕ້ອງການຈຳເປັນ ແລະ ການຈັດລຳດັບຄວາມສຳຄັນໃນການພັດທະນາຕົນເອງໂດຍຈຳແນກເປັນລາຍດ້ານ ພົບວ່າ ຄວາມຕ້ອງການຈຳເປັນໃນການພັດທະນາຕົນເອງຂອງນັກສຶກສາດ້ານການບໍລິຫານຈັດການ ດ້ານວິຊາການ ດ້ານການຈັດການຮຽນ-ການສອນ ແລະ ດ້ານອຸປະກອນສື່ເທັກໂນໂລຍີທາງການສອນ ກຸ່ມເປົ້າໝາຍມີຄວາມແຕກຕ່າງກັນທຸກດ້ານ ແລະ ພົບວ່າ ມີຄວາມຕ້ອງການຈຳເປັນທຸກດ້ານ ($PNI_{modified}$ ຫຼາຍກວ່າ 0.20 ຂຶ້ນໄປ)

ນອກຈາກນີ້ ເມື່ອພິຈາລະນາລຳດັບຂອງຄວາມສຳຄັນ ພົບວ່າ ດ້ານການບໍລິຫານຈັດການມີຄວາມສຳຄັນລຳດັບທີ 1 ($PNI_{modified} = 0.77$) ລຳດັບທີ 2 ດ້ານອຸປະກອນສື່ເທັກໂນໂລຍີທາງການສອນ ($PNI_{modified} = 0.71$) ລຳດັບທີ 3 ດ້ານການຈັດການຮຽນ-ການສອນ($PNI_{modified} = 0.58$) ແລະ ລຳດັບສຸດທ້າຍ ຄື ດ້ານວິຊາການ ($PNI_{modified} = 0.56$)

ຜົນການສຳພາດຈາກກຸ່ມເປົ້າໝາຍຂອງຜູ້ບໍລິຫານ ແລະ ອາຈານຜູ້ສອນ ຈາກຜູ້ທີ່ມີສ່ວນກ່ຽວຂ້ອງກ່ຽວກັບສະພາບເປັນຢູ່ ແລະ ຄວາມຕ້ອງການຈຳເປັນໃນການພັດທະນາຕົນເອງ ພົບວ່າ ມີຄວາມຕ້ອງການຈຳເປັນເລັ່ງດ່ວນທີ່ຈະຕ້ອງພັດທະນາສົ່ງເສີມໃຫ້ແກ່ຄູນິອິງຄວາມຮູ້ໂດຍສະເພາະສະຖາບັນການຜະລິດຄູຜູ້ສອນໃຫ້ມີຄວາມຮູ້ ແລະ ເຂົ້າໃຈ ແລະ ສາມາດສົ່ງຜ່ານຫຼືມີເຕັກນິກວິທີການໃນການຈັດການຮຽນ-ການສອນໄປສູ່ຜູ້ຮຽນໄດ້ຢ່າງປະສິບຜົນສຳເລັດສູງ ນອກນັ້ນຍັງສອດຄ່ອງກັບແຜນຍຸດທະສາດການພັດທະນາຄູ ແລະ ບຸກຄະລາກອນຂອງຂະແໜງການສຶກສາທິການ ແລະ ກິລາ ຮອດປີ 2025 ຕ້ອງສົ່ງເສີມການຝຶກອົບຮົມ ແລະ ຍົກລະດັບຄູ ແລະ ບຸກຄະລາກອນການສຶກສາ ແລະ ກິລາ ໃຫ້ມີຄຸນນະພາບ ແລະ ປະສິດທິພາບ

## 6. ອະພິປາຍຜົນ

ຈາກວັດຖຸປະສົງການຄົ້ນຄ້ວາເພື່ອສຳຫຼວດຄວາມຕ້ອງການໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກຜູ້ຄົ້ນຄ້ວາໄດ້ດຳເນີນການວິເຄາະແບບສອບຖາມຈາກກຸ່ມເປົ້າໝາຍ 3 ກຸ່ມ ໄດ້ແກ່ ຜູ້ບໍລິຫານ ຄູຜູ້ສອນຜູ້ສອນ ແລະ ນັກສຶກສາ ຜົນການຄົ້ນຄ້ວາມີດັ່ງຕໍ່ໄປນີ້.

1. ຜົນການສຶກສາຂໍ້ມູນພື້ນຖານຂອງກຸ່ມເປົ້າໝາຍຂອງຜູ້ຕອບແບບສອບຖາມທີ່ກຸ່ມເປົ້າໝາຍ 3 ກຸ່ມ ໄດ້ແກ່ ກຸ່ມຜູ້ບໍລິຫານ ແລະ ຄູຜູ້ສອນຜົນຈາກການວິເຄາະພົບວ່າ ສ່ວນຫຼາຍເປັນເພດຊາຍ ແລະ ມີອາຍຸ 32 ປີຂຶ້ນໄປ ແລະ ສ່ວນກຸ່ມນັກສຶກສາສ່ວນຫຼາຍເປັນເພດຍິງ ແລະ ສ່ວນຫຼາຍມີອາຍຸໃນລະຫວ່າງ 20-25 ປີ

2. ຜົນການສຳຫຼວດສະພາບເປັນຢູ່ ແລະ ຄວາມຕ້ອງການຈຳເປັນໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂາວິທະຍາສາດການສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ ປະກອບດ້ວຍ ດ້ານການບໍລິຫານຈັດການ ດ້ານວິຊາການ ດ້ານການຈັດການຮຽນ-ການສອນ ແລະ ດ້ານອຸປະກອນສື່ເທັກໂນໂລຍີທາງການສອນມີລາຍລະອຽດດັ່ງຕໍ່ໄປນີ້

2.1) ດ້ານການບໍລິຫານຈັດການ ທັງ 3 ກຸ່ມ ປະກອບດ້ວຍ ຜູ້ບໍລິຫານ ຄູຜູ້ສອນຜູ້ສອນ ແລະ ນັກສຶກສາມີການດຳເນີນການຢູ່ໃນລະດັບນ້ອຍ ແລະ ມີຄວາມຈຳເປັນຕ້ອງການດ້ານການບໍລິຫານຈັດການ ໂດຍພາບຮວມຢູ່ໃນລະດັບຫຼາຍສະແດງໃຫ້ເຫັນວ່າໃນການພັດທະນາຕົນເອງຂອງນັກສຶກສາມີຄວາມຕ້ອງການຈຳເປັນ ການ ໄດ້ແກ່ ທັກສະການວາງແຜນ ເທັກນິກການປະສານງານ ທັກສະການປະເມີນຜົນ ເປັນຕົ້ນ

2.2) ດ້ານວິຊາການ ທັງ 3 ກຸ່ມ ປະກອບດ້ວຍ ຜູ້ບໍລິຫານ ຄູຜູ້ສອນຜູ້ສອນ ແລະ ນັກສຶກສາມີການດຳເນີນການຢູ່ໃນລະດັບປານກາງ ແລະ ມີຄວາມຈຳເປັນຕ້ອງການດ້ານວິຊາການ ໂດຍພາບຮວມຢູ່ໃນລະດັບຫຼາຍສະແດງໃຫ້ເຫັນວ່າໃນການພັດທະນາຕົນເອງຂອງນັກສຶກສາມີຄວາມຕ້ອງການຈຳເປັນໃນດ້ານວິຊາການ ໄດ້ແກ່ ເຕັກນິກການເຮັດຄົ້ນຄ້ວາ ເຕັກນິກການຖ່າຍທອດຄວາມຮູ້ໃຫ້ແກ່ນັກຮຽນ ແລະ ການຈັດກິດຈະກຳການຮຽນ-ການສອນໂດຍເນັ້ນການຮຽນແບບປະສົມປະສານ

2.3) ດ້ານການຈັດການຮຽນ-ການສອນ ທັງ 3 ກຸ່ມ ປະກອບດ້ວຍ ຜູ້ບໍລິຫານ ຄູຜູ້ສອນຜູ້ສອນ ແລະ ນັກສຶກສາມີການດຳເນີນການຢູ່ໃນລະດັບປານກາງ ແລະ ມີຄວາມຈຳເປັນຕ້ອງການດ້ານການຈັດການຮຽນ-ການສອນ ໂດຍພາບຮວມຢູ່ໃນລະດັບຫຼາຍສະແດງໃຫ້ເຫັນວ່າໃນການພັດທະນາຕົນເອງຂອງນັກສຶກສາມີຄວາມຕ້ອງການຈຳເປັນໄດ້ແກ່ ການວາງແຜນ ການອອກແບບກິດຈະກຳການສອນ ແລະ ການຈັດການຮຽນ-ການສອນໃຫ້ນັກຮຽນໄດ້ເກີດທັກສະການແກ້ບັນດ້ວຍຕົນເອງ

2.4) ດ້ານອຸປະກອນສື່ເທັກໂນໂລຍີທາງການສອນ ທັງ 3 ກຸ່ມ ປະກອບດ້ວຍ ຜູ້ບໍລິຫານ ຄູຜູ້ສອນຜູ້ສອນ ແລະ ນັກສຶກສາມີການປະຕິບັດ ແລະ ສິ່ງເສີມທີດຳເນີນການຢູ່ໃນລະດັບນ້ອຍ ແລະ ມີຄວາມຈຳເປັນຕ້ອງການ ໂດຍພາບຮວມຢູ່ໃນລະດັບຫຼາຍສະແດງໃຫ້ເຫັນວ່າໃນການພັດທະນາຕົນເອງຂອງນັກສຶກສາມີຄວາມຕ້ອງການຈຳເປັນ ໄດ້ແກ່ ທັກສະການໃຊ້ອຸປະກອນເຄື່ອງສື່ເທັກໂນໂລຍີທາງການສອນ ເນັກທິກການບຳລຸງຮັກສາອຸປະກອນເຄື່ອງສື່ເທັກໂນໂລຍີທາງການສອນ ແລະ ການປະຍຸກໃຊ້ສື່ເທັກໂນໂລຍີທາງການສອນ

ນອກນັ້ນຜົນຈາກການສຳພາດຈາກກຸ່ມເປົ້າໝາຍຍັງພົບວ່າ ມີຄວາມຕ້ອງການຈຳເປັນເລັ່ງດ່ວນທີ່ຈະຕ້ອງພັດທະນາສິ່ງເສີມຍົກລະດັບຄວາມຮູ້ກ່ຽວກັບແນວທາງການຈັດການຮຽນ-ການສອນເປັນປັດໃຈສຳຄັນທີ່ຈະຊ່ວຍໃຫ້ຄູໄດ້ຮັບຄວາມຮູ້ເຖິງຄວາມປ່ຽນແປງຂອງຕົນເອງເຊິ່ງສອດຄ່ອງກັບກະຊວງສຶກສາທິການ ແລະ ກິລາ (2016) ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງສປປ ລາວ ຮອດປີ 2025 ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງຂອງຍຸດທະສາດການພັດທະນາ

ຊັບພະຍາກອນແຫ່ງຊາດ ແລະ ການປະຕິບັດງານ 5 ປີ 2016-2020.

## 7. ສະຫຼຸບຜົນຄົ້ນຄວ້າ

ລຳດັບຄວາມຕ້ອງການຈຳເປັນໃນການພັດທະນາຕົນເອງຂອງນັກສຶກສາຕໍ່ຫລັກສູດປະລິນຍາໂທສາຂວິທະຍາສາດການສຶກສາຄະນະສຶກສາສາດມະຫາວິທະຍາໄລຈຳປາສັກ ຜົນຂອງການວິເຄາະແບບສອບຖາມຈາກກຸ່ມເປົ້າໝາຍທັງ 3 ກຸ່ມ ກ່ຽວກັບ 4 ດ້ານໄດ້ແກ່ ດ້ານການບໍລິຫານຈັດການ ວິຊາການ ການຈັດການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກໃນການຈັດການຮຽນ-ການສອນ ພົບວ່າ ຄວາມຕ້ອງການຈຳເປັນ ດ້ານການບໍລິຫານຈັດການມີຄວາມສຳຄັນລຳດັບທີ 1 ($PNI_{modified} = 0.77$) ມີຄວາມສຳຄັນເປັນລຳດັບທີ 1 ລຳດັບທີ 2 ດ້ານອຸປະກອນສື່ເທັກໂນໂລຍີທາງການສອນ ($PNI_{modified} = 0.71$) ລຳດັບທີ 3 ດ້ານການຈັດການຮຽນ-ການສອນ ($PNI_{modified} = 0.58$) ແລະ ລຳດັບທີ 4 ດ້ານວິຊາການ ($PNI_{modified} = 0.56$)

### 7.1. ຂໍ້ສະເໜີແນະໃນການປະຕິບັດ

ຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກເປີດຫຼັກສູດປະລິນຍາໂທ ໂດຍດຳເນີນການດັ່ງຕໍ່ໄປນີ້

1. ດ້ານວິຊາການຄວນມີການຈັດການຝຶກອົບຮົມກ່ຽວກັບເທັກນິກການເຮັດການຄົ້ນຄ້ວາວິໄຈ ແລະ ການຂຽນແຜນງານໂຄງການໃຫ້ແກ່ຄູ ແລະ ນັກສຶກສາ

2. ດ້ານຂໍ້ມູນຂ່າວສານ ຄວນໃຫ້ມີການປະສາສຳພັນຫລັກສູດສາຂາວິຊາທີ່ເປີດໃຫ້ຫຼາຍຮູບແບບເພື່ອໃຫ້ຜູ້ທີ່ມີຄວາມສົນໃຈໄດ້ເຂົ້າເຖິງຂໍ້ມູນ

3. ດ້ານການບໍລິການ ຄວນມີການຈັດການຮຽນ-ການສອນໃຫ້ຫຼາກຫຼາຍຮູບແບບເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ຕ່າງແຂວງ

4. ດ້ານອຸປະກອນຄວນຕຽມຄວາມພ້ອມດ້ານບຸກຄາກອນ ອາຄານສະຖານທີ່ ເອກະສານຕຳລາເທັກໂນໂລຍີເພື່ອການສຶກສາໃຫ້ພ້ອມ

### 7.2. ຂໍ້ສະເໜີແນະໃນການຄົ້ນຄວ້າຄັ້ງຕໍ່ໄປ

1. ຄວນມີການສຳຫຼວດຄວາມຕ້ອງການໄປສູ່ຜູ້ບໍລິຫານ ແລະ ຄູຜູ້ສອນໃນໂຮງຮຽນມັດທະຍົມຕອນຕົ້ນ-ຕອນປາຍຂະໜາດກາງ ແລະ ນ້ອຍ ແລະ ເພີ່ມກຸ່ມຕົວຢ່າງແຕ່ປະເພດໃຫ້ຫຼາຍຂຶ້ນ

2. ຄວນສ້າງແບບສອບຖາມສະເພາະຜູ້ປົກຄອງຂອງນັກສຶກສາ 1 ຊຸດໂດຍການເພີ່ມຄຳຖາມແບບປາຍເປີດເພື່ອໃຫ້ຜູ້ປົກຄອງໄດ້ສະແດງຄວາມຄິດເຫັນເພີ່ມເຕີມ

3. ຄວນເພີ່ມສາຂາວິຊາໃນການສຳຫຼວດໃຫ້ຫຼາຍກວ່ານີ້ ແລະ ຄວນມີການສຳຫຼວດຄວາມຕ້ອງການທຸກ ໆ 2 ປີ

## 8. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2016). ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ປີ 2016-2020. ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2016). ດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ຍຸດທະສາດການພັດທະນາຊັບພະຍາກອນມະນຸດ ຮອດປີ 2025

ກະຊວງສຶກສາທິການ ແລະ ກິລາ. (2016). ແຜນຍຸດທະສາດ ມະຫາວິທະຍາໄລ ຈຳປາສັກ 5 ປີ 2021-2025. ນະຄອນປາກເຊ:

ແຂວງຈຳປາສັກ. (2021). ແຜນພັດທະນາເສດຖະກິດ-ສັງຄົມຂອງ 5 ປີ ຄັ້ງທີ IX (2021-2025) ຂອງແຂວງຈຳປາສັກ.

บุนชม ศรีสะอาด. (2545). การวิจัยเบื้องต้น ( พิมพ์ครั้งที่ 6). กรุงเทพ: สุวีริยาสาส์นจำกัด.

ສຸວິມົນ ວ່ອງວາໜິດ. (2558). ການວິໄຈປະເມີນ

ຄວາມຕ້ອງການຈຳເປັນ. ພິມຄັ້ງທີ 3 ສະບັບປັບປຸງ. ກຸງເທບ:ສຳນັກພິມແຫ່ງຈຸລາລົງກອນມະຫາວິທະຍາໄລ

Bamrung Meesuk. (2003). A study of the Needs of Academic Development in Primary Schools Under the Office of Suphanburi Pronincial Primary Education. Kanchanaburi Rajabhat.

Boonrada Chaiboonruang. (2017). The Lessons Learned for Improving Quality of Instructional Administration in Early Childhood Education Based on Waldor Approach at Chiag Rai Panyanukul School. Graduate School, Chiang Rai Rajabhat University.

Bucher, Rue and Strauss, Anselm. (1961). Profession in Process. The American Journal of Sociology. 66: 325-334; Janury.

Davidson, Howard S. (1995). "Making Need: Toward a Historiacl Sociology of Needs in Adult and Continuing Education", Adult Education Quarterly. (Volume 45) Number (4)

Goode, William. (1957). Community Within a Community: The Professional. American Sociology Review. 22:194-200

Jevons, F.R. and H.D. Tuchar. (1972). What Kinds of Graduates Do We Need. Oxford University Press,

Pattaveekant Srihong. (2003). Needs Assessment Prioritzation in Self Development of Nurses at Uttaradit Hospital. Rajabhat Institute Uttaradit.

he need for administration and management was the first rang ( $PNI_{modified} = 0.77$ ). Visual aids and technology was second rang $PNI_{modified} = 0.71$ . Learning and teaching management was the third rang ( $PNI_{modified} = 0.58$ ), and academic improvement was the fourth rang ( $PNI_{modified} = 0.56$ ). According to the interview data, participants are willing to develop themselves in all areas.

**Keywords:** Need, Student's development, Master's Program in Education Science